**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງພາຍໃນ** ເລກທີ 649/ພນ

ນະຄອນຫຼວງວຽງຈັນ, ວັນທີ 24 ສິງຫາ 2016

# ຂໍ້ຕົກລົງ
# ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງບ້ານ

- **ອີງຕາມ** ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບປັບປຸງ ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- **ອີງຕາມ** ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພາຍໃນ ສະບັບສະບັບເລກທີ 253/ນຍ, ລົງວັນທີ 19 ສິງຫາ 2011.

**ລັດຖະມົນຕີກະຊວງພາຍໃນ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1** ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກ ເພື່ອກຳນົດກ່ຽວກັບ ຫຼັກການ, ໜ່ວຍງານຊ່ວຍວຽກບ້ານ, ການເລືອກຕັ້ງ ຫຼື ແຕ່ງຕັ້ງນາຍບ້ານ, ການພົ້ນຈາກຕຳແໜ່ງ, ການເງິນບ້ານ ແລະ ລະບອບແບບແຜນວິທີເຮັດວຽກ ແນໃສ່ເປັນບ່ອນອີງໃນການປັບປຸງການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງອົງການປົກຄອງບ້ານ ໃນການສ້າງບ້ານໃຫ້ເປັນຫົວໜ່ວຍພັດທະນາ.

**ມາດຕາ 2** ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບ້ານໃນຂອບເຂດທົ່ວປະເທດ.

**ມາດຕາ 3** ຫຼັກການ

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງບ້ານປະຕິບັດຕາມຫຼັກການ:

1) ລວມສູນປະຊາທິປະໄຕ, ປຶກສາຫາລືເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ສຽງສ່ວນໜ້ອຍປະຕິບັດຕາມສຽງສ່ວນຫຼາຍ, ບຸກຄົນຂຶ້ນກັບການຈັດຕັ້ງ;
2) ຮັບປະກັນສະຖຽນລະພາບຂອງການຈັດຕັ້ງ, ລັກສະນະຕໍ່ເນື່ອງ ແລະ ຂະຫຍາຍຕົວຂອງວຽກງານ;
3) ເຮັດໃຫ້ອົງການປົກຄອງບ້ານໂປ່ງໃສ, ເຂັ້ມແຂງ ແລະ ເຄື່ອນໄຫວຢ່າງມີປະສິດທິພາບ.

## ໝວດທີ 2
## ໜ່ວຍງານຊ່ວຍວຽກບ້ານ

**ມາດຕາ 4** ຈຳນວນຂອງພະນັກງານຊ່ວຍວຽກບ້ານ

ແຕ່ລະໜ່ວຍງານຊ່ວຍວຽກຂອງບ້ານໃຫ້ປະກອບດ້ວຍ ໜຶ່ງ ຫາ ສາມຄົນ ໂດຍອີງໃສ່ຈຳນວນພົນລະເມືອງ ຫຼື ຄວາມຈຳເປັນຂອງໜ້າວຽກຕົວຈິງຂອງບ້ານ, ໃນນັ້ນ ນາຍບ້ານ ແລະ ຮອງນາຍບ້ານ ຕ້ອງເປັນຫົວໜ້າໜ່ວຍງານຊ່ວຍວຽກບ້ານ ໜຶ່ງ ຫຼື ສອງໜ່ວຍງານກໍ່ໄດ້.

**ມາດຕາ 5** ໜ້າທີ່ຄວາມຮັບຜິດຊອບຂອງໜ່ວຍງານຊ່ວຍວຽກບ້ານ

1) ໜ່ວຍງານບໍລິຫານ ແລະ ການປົກຄອງ

- ຮັບຜິດຊອບວຽກຂາເຂົ້າ-ຂາອອກ; ຄຸ້ມຄອງຕາປະທັບຂອງນາຍບ້ານ, ເກັບມ້ຽນ ແລະ ປົກປັກຮັກສາເອກະສານ;
- ສັງລວມສະຖິຕິຮອບດ້ານ, ແຜນພັດທະນາບ້ານ, ກະກຽມ ແລະ ບັນທຶກກອງປະຊຸມຕ່າງໆຂອງບ້ານ;
- ຄົ້ນຄວ້າບັນດານິຕິກຳ, ຄຳສັ່ງ, ບົດແນະນຳຕ່າງໆຂອງພັກ ເພື່ອຫັນເປັນແຜນການ, ວິທີການຈັດຕັ້ງປະຕິບັດ;
- ຄົ້ນຄວ້າສ້າງກົດລະບຽບຂອງບ້ານ, ຊ່ວຍວຽກເອກະສານຂອງນາຍບ້ານ;
- ໃຫ້ຄວາມຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ ໃນການເຮັດວຽກຄຸ້ມຄອງພົນລະເມືອງ; ຮັບ ແລະ ຄົ້ນຄວ້ານຳສະເໜີແກ້ໄຂຄຳສະເໜີ, ຄຳຮ້ອງຂອງປະຊາຊົນຕາມຂອບເຂດສິດຂອງຕົນ;
- ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວຂອງນາຍບ້ານ, ປະສານງານກັບອົງການຈັດຕັ້ງມະຫາຊົນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ;
- ຊ່ວຍອົງການປົກຄອງບ້ານໃນການຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງ-ພະນັກງານ ແລະ ເຮັດວຽກງານແຂ່ງຂັນ-ຍ້ອງຍໍຂອງບ້ານ;
- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

2) ໜ່ວຍງານພັກ ແລະ ອົງການຈັດຕັ້ງມະຫາຊົນ

- ຊ່ວຍຕິດຕາມ, ກວດກາ ແລະ ຊຸກຍູ້ການປະຕິບັດມະຕິຂອງການຈັດຕັ້ງຮາກຖານພັກ, ການເຄື່ອນໄຫວວຽກງານຂອງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂອງບ້ານ;
- ຊ່ວຍໜ່ວຍພັກບ້ານ, ຄະນະພັກຮາກຖານໃນການຄົ້ນຄວ້າ, ປັບປຸງກົງຈັກການຈັດຕັ້ງຂອງພັກ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນຂອງບ້ານ;
- ຊ່ວຍໜ່ວຍພັກບ້ານ, ຄະນະພັກຮາກຖານໃນການເກັບກຳຂໍ້ມູນ, ສະຫຼຸບສັງລວມສະພາບການເຄື່ອນໄຫວນຳພາຮອບດ້ານຂອງໜ່ວຍພັກບ້ານ, ຄະນະພັກຮາກຖານ, ກະກຽມປະຊຸມຮ່ວມຊີວິດໜ່ວຍພັກບ້ານ ປະຈຳເດືອນ, ສາມເດືອນ, ຫົກເດືອນ ປະຈຳປີ ແລະ ກະກຽມດຳເນີນກອງປະຊຸມໃຫຍ່ຮາກຖານພັກ;
- ຊ່ວຍໜ່ວຍພັກບ້ານ, ຄະນະພັກຮາກຖານ ສ້າງແຜນການ ກໍ່ສ້າງໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ ພ້ອມທັງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດແຜນການກໍ່ສ້າງໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານຂອງບ້ານ ແລະ ຕິດຕາມ, ກວດກາ, ຊຸກຍູ້ ການປະຕິບັດຂໍ້ແຂ່ງຂັນ ແລະ ວຽກງານ

ປ້ອງປ່ຽນຂອງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຢູ່ຂັ້ນບ້ານ;

- ຄົ້ນຄວ້າຊ່ວຍໜ່ວຍພັກບ້ານ, ຄະນະພັກຮາກຖານ ໃນການຮ່າງມະຕິ, ຄຳສັ່ງ, ຂໍ້ຕົກລົງ, ແຈ້ງການ, ໜັງສືທາງລັດຖະການກ່ຽວກັບວຽກງານຈັດຕັ້ງ, ວຽກງານພັກ-ພະນັກງານ, ວຽກງານແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ;
- ຊ່ວຍໜ່ວຍພັກບ້ານ, ຄະນະພັກຮາກຖານ ໃນການຄຸ້ມຄອງ, ກຳແໜ້ນທາງດ້ານຈຳນວນ, ຄຸນນະພາບຂອງຖັນແຖວສະມາຊິກພັກ, ພະນັກງານ ແລະ ການຈັດຕັ້ງໃນລະບົບການເມືອງຢູ່ຂັ້ນບ້ານ;
- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງໜ່ວຍພັກບ້ານ, ຄະນະພັກຮາກຖານ ແລະ ອົງການປົກຄອງບ້ານທີ່ພົວພັນເຖິງຄວາມຮັບຜິດຊອບຂອງຕົນ.

3) ໜ່ວຍງານເສດຖະກິດ-ການເງິນ

- ຈັດສັນບ່ອນທຳມາຫາກິນ, ຮັບຜິດຊອບກິດຈະການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ຄຸ້ມຄອງກອງທຶນພັດທະນາບ້ານ;
- ປຸກລະດົມ, ຊຸກຍູ້ວຽກງານກະສິກຳ-ປ່າໄມ້: ປູກພືດຜັກ, ປູກຕົ້ນໄມ້ກິນໝາກ, ໄມ້ອຸດສາຫະກຳ, ປູກປ່າ; ການລ້ຽງສັດທີ່ເປັນມູນເຊື້ອ; ປົກປັກຮັກສາປ່າໄມ້, ປ່າສະຫງວນ, ປ່າໄມ້ທີ່ເປັນ ຕົ້ນແຫຼ່ງນ້ຳລຳເຊ, ສິ່ງແວດລ້ອມທີ່ດີຂອງບ້ານ;
- ຮັບຜິດຊອບຕິດຕາມ ແລະ ແຈ້ງເຫດການພາຍຸສັດລະບາດ,ໄພທຳມະຊາດທຳລາຍຜົນລະປູກ ແລະ ປ່າໄມ້ໃນຂອບເຂດບ້ານຕົນ;
- ປຸກລະດົມ, ຊຸກຍູ້ ແລະ ຄຸ້ມຄອງວຽກງານຫັດຖະກຳ: ການຈັກສານ, ຕຳແຜ່ນ, ໂຮງຊ່າງຫັດຖະກຳຕ່າງໆ ທີ່ເປັນມູນເຊື້ອຂອງບ້ານ; ການຈັດຕັ້ງຫົວໜ່ວຍເສດຖະກິດຕ່າງໆຂອງບ້ານ ເຊັ່ນ: ຫ້າງຮ້ານ, ຫົວໜ່ວຍການຄ້າ, ການບໍລິການ, ການຜະລິດທຸລະກິດ...
- ປຸກລະດົມ, ຊຸກຍູ້ປະຊາຊົນໃນການສ້າງ ແລະ ບູລະນະປັບປຸງເສັ້ນທາງ, ຮ່ອງລະບາຍນ້ຳ, ຝາຍກັ້ນນ້ຳ, ຄອງເໝືອງ ແລະ ພື້ນຖານໂຄງລ່າງທາງເສດຖະກິດອື່ນໆ ຂອງບ້ານ;
- ເກັບກຳ ແລະ ຄຸ້ມຄອງສະຖິຕິກ່ຽວກັບສະພາບເສດຖະກິດຂອງບ້ານເຊັ່ນ: ເນື້ອທີ່ດອນດິນ, ຜົນໄດ້ຮັບທາງດ້ານການຜະລິດກະສິກຳ, ຫັດຖະກຳ ແລະ ຫົວໜ່ວຍເສດຖະກິດຕ່າງໆທີ່ມີຢູ່ໃນບ້ານ, ຂໍ້ມູນມາດຕະຖານ ຄວາມທຸກຍາກ, ມາດຕະຖານພັດທະນາ ແລະ ອື່ນໆ;
- ຮັບຜິດຊອບວຽກງານການເງິນ ທີ່ບ້ານມີພັນທະເກັບສົ່ງໃຫ້ຂັ້ນເມືອງຕາມລະບຽບຂອງກະຊວງການເງິນ; ເງິນຮັບໃຊ້ການບໍລິຫານບ້ານ ແລະ ເງິນປະກອບສ່ວນຂອງປະຊາຊົນເຂົ້າໃນກິດຈະການ ຫຼື ວຽກງານຕ່າງໆຂອງບ້ານ.
- ຄ່າທຳນຽມນຳໃຊ້ທີ່ດິນ, ອາກອນຊົມພະຍາກອນ, ຄ່າທຳນຽມ ແລະ ຄ່າບໍລິການວິຊາການຂອງລັດ ຕາມວຽກທີ່ຂະແໜງການຕ່າງໆມອບໝາຍໃຫ້ເກັບ ຕາມລະບຽບຂອງກະຊວງການເງິນ ແລະ ຕາມອັດຕາທີ່ລະບຸໄວ້ໃນລັດຖະບັນຍັດຂອງປະທານປະເທດທີ່ມີຜົນບັງຄັບໃຊ້ ແລະ ວຽກງານຕ່າງໆ ຂອງບ້ານ;
- ສົ່ງເສີມ, ຈັດຕັ້ງກຸ່ມອາຊີບ ແລະ ປົກປ້ອງສິດຜົນປະໂຫຍດຂອງເຂົາເຈົ້າ;
- ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

4) ໜ່ວຍງານວັດທະນະທຳ-ສັງຄົມ

- ປຸກລະດົມ, ຊຸກຍູ້ປະຊາຊົນໃນການອອກແຮງງານລວມ, ປະກອບວັດຖຸປັດໄຈ ເພື່ອສ້າງສາ, ບູລະນະກິດຈະການສາທາລະນະປະໂຫຍດເຊັ່ນ: ໂຮງຮຽນ, ໂຮງໝໍ, ສຸກສາລາ, ວັດ, ໂບດ, ປ່າຊ້າ, ສະຖານກິລາ(ບ່ອນຫຼິ້ນກິລາ), ຫໍມູນເຊື້ອ, ຫໍສະໝຸດ, ຫໍຂ່າວ, ໂທລະໂຄ່ງຊາວບ້ານ ແລະ ອື່ນໆ;
- ປຸກລະດົມປະຊາຊົນໃຫ້ປະຕິບັດຕາມຫຼັກອານາໄມ 3 ສະອາດ: ຢູ່ສະອາດ, ກິນດື່ມສະອາດ ແລະ ນຸ່ງຫົ່ມສະອາດ; ປະສານສົມທົບກັບພະນັກງານສາທາລະນະສຸກໃນການຈັດຕັ້ງປ້ອງກັນ, ປິ່ນປົວ ແລະ ສັກຢາກັນພະຍາດຕ່າງໆໃຫ້ແກ່ປະຊາຊົນ ໂດຍສະເພາະແມ່ນສໍາລັບແມ່ ແລະ ເດັກ;
- ປຸກລະດົມປະຊາຊົນໃຫ້ເອົາໃຈໃສ່ຊ່ວຍເຫຼືອຄູ, ແພດໝໍ ແລະ ພະນັກງານຂະແໜງການຕ່າງໆ ທີ່ລົງມາປະຕິບັດໜ້າທີ່ປະຈໍາຢູ່ໃນບ້ານຂອງຕົນ.ປຸກລະດົມໃຫ້ເດັກໃນໄວຮຽນໃຫ້ໄດ້ເຂົ້າໂຮງຮຽນ; ສົ່ງເສີມຂະບວນການຮໍ່າຮຽນບໍາລຸງຍົກລະດັບການສຶກສາຂອງປະຊາຊົນ ພາຍໃນບ້ານ;
- ເອົາໃຈໃສ່ຊຸກຍູ້ໃຫ້ປະຊາຊົນປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທໍາອັນດີງາມຂອງຊາດ, ຂອງທ້ອງຖິ່ນ, ປົກປັກຮັກສາປູສະນີຍະສະຖານ ແລະ ວັດຖຸບູຮານໃນຂອບ ເຂດບ້ານຂອງຕົນ;
- ຮັບຜິດຊອບຈັດຕັ້ງບຸນປະເພນີຕ່າງໆຂອງບ້ານ ແລະ ທ້ອງຖິ່ນ, ສົ່ງເສີມ ແລະ ຖະໜອມຮັກປະເພນີອັນດີງາມເຫຼົ່ານັ້ນເພື່ອສືບທອດໄປໃຫ້ຄົນຮຸ່ນຫຼັງ;
- ຊີ້ນໍາອົງການຈັດຕັ້ງສັງຄົມຕ່າງໆ ທີ່ມີໃນບ້ານໃຫ້ເຄື່ອນໄຫວ ຖືກຕ້ອງຕາມກົດລະບຽບຂອງຕົນ ແລະ ຂໍ້ກໍານົດກົດໝາຍຂອງລັດ;
- ຮັບຜິດຊອບຕໍ່ການປະຕິບັດນະໂຍບາຍຊ່ວຍເຫຼືອບຸກຄົນ ແລະ ຄອບຄົວທີ່ຖືກໄພພິບັດຈາກທໍາມະຊາດ, ທຸກຍາກໄດ້ຍາກ, ຂາດເຂີນທາງດ້ານວັດຖຸ ແລະ ແຮງງານທີ່ບໍ່ສາມາດຫາລ້ຽງຕົນເອງໄດ້ເຊັ່ນ: ຜູ້ເຖົ້າແກ່ຊະລາ, ແມ່ຮ້າງ, ແມ່ໝ້າຍ, ເດັກກໍາພ້າ-ກໍາພອຍ, ຜູ້ເສຍອົງຄະ...
- ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

5) ໜ່ວຍງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

- ຈັດຕັ້ງການເຜີຍແຜ່ກົດໝາຍ, ລະບຽບການຂອງລັດ, ປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍ, ປ້ອງກັນຄວາມສະຫງົບສຸກພາຍໃນບ້ານ, ຄຸ້ມຄອງແຮງງານຕ່າງປະເທດ; ນໍາພາສ້າງ ບ້ານປອດຢາເສບຕິດ, ບ້ານປອດຄະດີ;
- ຊ່ວຍນາຍບ້ານປ້ອງກັນເຫດຮ້າຍທີ່ຈະເກີດຂຶ້ນໃນຂອບເຂດບ້ານ ແລະ ຊີ້ນໍາໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂອງບ້ານ, ສຶກສາອົບຮົມ, ຈໍາແນກຄວາມຜິດຄວາມຖືກ, ລະງັບຄວາມຜິດຂ້ອງຕ້ອງຖຽງກັນພາຍໃນ ແນໃສ່ເພີ່ມທະວີຄວາມສາມັກຄີ, ຄວາມຖືກຕ້ອງປອງດອງ ແລະ ຊ່ວຍເຫຼືອກັນພາຍໃນບ້ານ;
- ປະສານສົມທົບກັບທຸກກໍາລັງຂອງລັດ ທີ່ຕັ້ງຢູ່ໃນຂອບເຂດບ້ານຂອງຕົນ ເພື່ອພ້ອມກັນເຄື່ອນໄຫວວຽກປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
- ຊີ້ນໍາ ປກສ ແລະ ກອງຫຼອນບ້ານໃຫ້ເຄື່ອນໄຫວ, ປະຕິບັດໜ້າທີ່ຕາມທີ່ໄດ້ຮັບມອບໝາຍ;
- ຈັດຕັ້ງຈຸ, ໜ່ວຍເວນຍາມໃນເມື່ອມີວຽກລວມຂອງບ້ານ, ມີເຫດຮ້າຍ, ໄພພິບັດ ແລະ ພາວະສຸກເສີນ ແລະ ງານບຸນສໍາຄັນຕ່າງໆຂອງພັກ ແລະ ຂອງຊາດ ຕາມການຊີ້ນໍາຂອງຂັ້ນເທິງ;
- ຄຸ້ມຄອງ ແລະ ນໍາໃຊ້ເງິນພັນທະປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງບ້ານໃຫ້ມີປະສິດທິຜົນ;
- ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ການເລືອກຕັ້ງ ຫຼື ແຕ່ງຕັ້ງນາຍບ້ານ

**ມາດຕາ 6** ຫຼັກການ

ການເລືອກຕັ້ງ ຫຼື ແຕ່ງຕັ້ງນາຍບ້ານໃນທົ່ວປະເທດປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

- ຫຼັກການພັກນຳພາ;
- ຫຼັກການລວມສູນປະຊາທິປະໄຕ, ປຶກສາຫາລືເປັນໝູ່ຄະນະ;
- ຫຼັກການລົງຄະແນນສຽງໂດຍກົງ ແລະ ປິດລັບ.

**ມາດຕາ 7** ທິດນຳ

ການເລືອກຕັ້ງ ຫຼື ແຕ່ງຕັ້ງນາຍບ້ານໃນທົ່ວປະເທດປະຕິບັດຕາມທິດນຳດັ່ງນີ້:

- ໃຫ້ເລຂາໜ່ວຍພັກບ້ານອອກສະໝັກຮັບເລືອກຕັ້ງເປັນນາຍບ້ານ ເພື່ອຄວບຕຳແໜ່ງເລຂາ ໜ່ວຍພັກກັບນາຍບ້ານ;
- ໃຫ້ຄະນະພັກຮາກຖານ ຫຼື ໜ່ວຍພັກບ້ານ, ສະມາຊິກພັກບ້ານ, ຊາວບ້ານຜູ້ທີ່ມີຄວາມຫ້າວຫັນເປັນແບບຢ່າງ, ມີມາດຕະຖານເງື່ອນໄຂຄົບຖ້ວນ ແລະ ໄດ້ຮັບຄວາມເຊື່ອຖືຮັກແພງ-ເຊື່ອໝັ້ນໄວ້ວາງໃຈຈາກຊາວບ້ານ ອອກສະໝັກຮັບເລືອກຕັ້ງເປັນນາຍບ້ານ;
- ໃຫ້ເລືອກເຟັ້ນເອົາພະນັກງານ-ລັດຖະກອນ (ນາຍຄູ, ທະຫານ, ຕຳຫຼວດ, ພະນັກງານວິຊາການ...) ທີ່ດຳລົງຊີວິດ ຫລື ເຮັດວຽກປະຈຳຢູ່ບ້ານ ແລະ ໄດ້ຮັບຄວາມເຄົາລົບຮັກແພງ-ຄວາມເຊື່ອໝັ້ນໄວ້ວາງໃຈຈາກຊາວບ້ານອອກສະໝັກຮັບເລືອກຕັ້ງເປັນນາຍບ້ານ; ເມື່ອສິ້ນສຸດສະໄໝຂອງນາຍບ້ານກໍໃຫ້ກັບຄືນໄປສືບຕໍ່ວຽກງານໃນກົມກອງເດີມ;
- ໃຫ້ແຕ່ງຕັ້ງພະນັກງານໄປເປັນນາຍບ້ານຢູ່ບ່ອນທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 8.** ເງື່ອນໄຂ ແລະ ມາດຕະຖານຂອງຜູ້ມີສິດສະໝັກຮັບເລືອກຕັ້ງເປັນນາຍບ້ານ

1) ເງື່ອນໄຂ
   - ສັນຊາດລາວໂດຍກຳເນີດ, ບໍ່ຈຳແນກເພດ, ເຜົ່າ, ສາສະໜາ;
   - ມີຄວາມຕື່ນຕົວສະໝັກໃຈ;
   - ມີອາຍຸຢ່າງໜ້ອຍ ຊາວເອັດ ປີຂຶ້ນໄປ;
   - ບໍ່ເຄີຍຖືກໂທດຕັດອິດສະຫຼະພາບ;
   - ເປັນຜູ້ຕັ້ງຖິ່ນຖານຢູ່ບ້ານນັ້ນຢ່າງໜ້ອຍ ສອງ ປີເຕັມຂຶ້ນໄປ;
   - ມີສຸຂະພາບແຂງແຮງດີ.

2) ມາດຕະຖານ
   - ເປັນຜູ້ມີຄວາມຈົງຮັກພັກດີ, ຊື່ສັດບໍລິສຸດຕໍ່ພັກ-ລັດ;
   - ມີທັດສະນະມະຫາຊົນຖືກຕ້ອງ, ໄດ້ຮັບຄວາມເຊື່ອຖືຮັກແພງຈາກປະຊາຊົນ ແລະ ເຊື່ອໝັ້ນຈາກພັກ-ລັດ;
   - ຮູ້ປຸກລະດົມຂົນຂວາຍ, ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ຮູ້ພິຈາລະນາ ຄວາມ

ຄຶດເຫັນທີ່ດີມີປະໂຫຍດຂອງປະຊາຊົນພາຍໃນບ້ານ;
  - ມີຄວາມສາມາດ ໃນການນຳພາປະຊາຊົນໃນທ້ອງຖິ່ນຂອງຕົນ ເພື່ອຈັດຕັ້ງປະຕິບັດແນວທາງ ນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ;
  - ມີລະດັບການສຶກສາຢ່າງຕ່ຳຈົບຊັ້ນປະຖົມຂຶ້ນໄປ; ສຳລັບເລຂາໜ່ວຍພັກຮາກຖານບ້ານ ແລະ ນາຍບ້ານຢູ່ຕົວເມືອງ ຕ້ອງຈົບມັດທະຍົມປາຍ.

3) ຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນນາຍບ້ານ

ຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນນາຍບ້ານຕ້ອງມີຫຼາຍກວ່າ ໜຶ່ງ ຄົນ.

4) ຜູ້ມີສິດເລືອກຕັ້ງ

ຜູ້ມີສິດເລືອກຕັ້ງຕ້ອງເປັນຄົນສັນຊາດລາວ, ມີອາຍຸ ສິບແປດ ປີບໍລິບູນຂຶ້ນໄປ, ບໍ່ຈຳແນກເພດ, ເຜົ່າ, ສາສະໜາ, ມີຊື່ຂຶ້ນສຳມະໂນຄົວໃນບ້ານນັ້ນ.

5) ວັນເລືອກຕັ້ງ

ວັນປ່ອນບັດເລືອກຕັ້ງເອົານາຍບ້ານ ແມ່ນ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ກຳນົດ.

ນອກຈາກເງື່ອນໄຂ ແລະ ມາດຕະຖານ ທີ່ກຳນົດຂ້າງເທິງນີ້ແລ້ວ ຜູ້ມີສິດສະໝັກຮັບເລືອກຕັ້ງເປັນນາຍບ້ານ ຍັງຕ້ອງແມ່ນຜູ້ທີ່ເປັນຄະນະໜ່ວຍພັກບ້ານ, ສະມາຊິກພັກບ້ານ, ພະນັກງານ-ລັດຖະກອນ (ນາຍຄູ, ທະຫານ, ຕຳຫຼວດ, ພະນັກງານວິຊາການ...) ທີ່ຕັ້ງຖິ່ນຖານຢູ່ໃນບ້ານນັ້ນ ລວມທັງພະນັກງານທີ່ໄດ້ຮັບການແຕ່ງຕັ້ງ ໃຫ້ປະຕິບັດໜ້າທີ່ແບບມີກຳນົດຢູ່ຮາກຖານບ້ານນັ້ນ ແຕ່ ສອງ ປີ ຂຶ້ນໄປ; ມີອາຍຸ ຊາວເອັດ ຫາ ຫ້າສິບຫ້າ ປີ ທີ່ມີລັກສະນະເປັນຜູ້ນຳ, ກຽມພ້ອມບໍລິການຮັບໃຊ້ປະຊາຊົນ ແລະ ເປັນນັກພັດທະນາ; ໄດ້ຮັບຄວາມເຄົາລົບຮັກແພງ-ຄວາມເຊື່ອໝັ້ນໄວ້ວາງໃຈຈາກຊາວບ້ານຕື່ມອີກ.

**ມາດຕາ 9** ການກະກຽມການເລືອກຕັ້ງນາຍບ້ານ

**ກ.** ການກະກຽມສຳລັບຂັ້ນເມືອງ

1) ຫ້ອງການພາຍໃນເກັບກຳ, ສັງລວມບັນດາບ້ານ ທີ່ກຳລັງຈະໝົດສະໄໝ ແລະ ແຈ້ງໃຫ້ບ້ານຊາບ ເພື່ອກະກຽມຈັດກອງປະຊຸມປ່ອນບັດເລືອກຕັ້ງນາຍບ້ານ;

2) ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແຕ່ງຕັ້ງຄະນະຮັບຜິດຊອບເລືອກຕັ້ງນາຍບ້ານລົງໄປຊີ້ນຳ-ນຳພາບ້ານ ກະກຽມການເລືອກຕັ້ງນາຍບ້ານ; ໜ້າທີ່ຂອງຄະນະຮັບຜິດຊອບເລືອກຕັ້ງນາຍບ້ານ ມີດັ່ງນີ້:
  - ນຳພາການຄົ້ນຄວ້າແຕ່ງຕັ້ງຄະນະກະກຽມການເລືອກຕັ້ງນາຍບ້ານ ແລະ ອະນຸກຳມະການຕ່າງໆ ຂອງບ້ານ;
  - ນຳພາສ້າງເອກະສານຮັບໃຊ້ການເລືອກຕັ້ງນາຍບ້ານ;
  - ນຳພາຂະບວນການຄົ້ນຄວ້າເປົ້າໝາຍອອກສະໝັກຮັບເລືອກຕັ້ງເປັນນາຍບ້ານ;
  - ນຳພາຈັດຕັ້ງການປ່ອນບັດເລືອກຕັ້ງນາຍບ້ານ;
  - ລາຍງານຜົນການເລືອກຕັ້ງໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາ ແລະ ອອກຂໍ້ຕົກລົງແຕ່ງຕັ້ງນາຍບ້ານ ແລະ ຮອງນາຍບ້ານ.

**ຂ.** ການກະກຽມສຳລັບຂັ້ນບ້ານ

1) ຄະນະປົກຄອງບ້ານກຳນົດແຜນການປ່ອນບັດເລືອກຕັ້ງນາຍບ້ານ;

2) ຈັດກອງປະຊຸມເພື່ອນຳສະເໜີແຜນການປ່ອນບັດເລືອກຕັ້ງນາຍບ້ານ ໃຫ້ການຈັດຕັ້ງທຸກພາກສ່ວນ ແລະ ປະຊາຊົນ ພາຍໃນບ້ານ ເພື່ອຮັບຊາບ ແລະ ມີຄວາມເປັນເອກະພາບ;

3) ນາຍບ້ານແຕ່ງຕັ້ງຄະນະກະກຽມການເລືອກຕັ້ງນາຍບ້ານ ແລະ ອະນຸກຳມະການຮັບຜິດຊອບປ່ອນບັດເລືອກຕັ້ງນາຍບ້ານ; ຄະນະກະກຽມເລືອກຕັ້ງນາຍບ້ານປະກອບດ້ວຍ: ຮອງເລຂາຄະນະພັກຮາກຖານ ຫຼື ໜ່ວຍພັກບ້ານ, ຮອງນາຍບ້ານ, ປະທານແນວລາວສ້າງຊາດ ບ້ານ, ປະທານສະຫະພັນແມ່ຍິງບ້ານ; ເລຂາຊາວໜຸ່ມປະຊາຊົນປະຕິວັດລາວ ບ້ານ, ປະທານສະຫະພັນນັກຮົບເກົ່າ ແລະ ຜູ້ຊົງຄຸນວຸດທິ. ໜ້າທີ່ ຮັບຜິດຊອບ ຂອງຄະນະກະກຽມການເລືອກຕັ້ງນາຍບ້ານ ມີດັ່ງນີ້:

- ກະກຽມມາດຕະຖານເງື່ອນໄຂຂອງຜູ້ທີ່ຈະອອກສະໝັກຮັບເລືອກຕັ້ງ;
- ຄົ້ນຄວ້າເປົ້າໝາຍທາບທາມເພື່ອອອກສະໝັກຮັບເລືອກຕັ້ງນາຍບ້ານ;
- ແຈ້ງລາຍຊື່ຜູ້ສະໝັກຮັບເລືອກຕັ້ງເປັນນາຍບ້ານ ແລະ ຂຶ້ນບັນຊີເກັບກຳຈຳນວນຜູ້ມີສິດປ່ອນບັດເລືອກຕັ້ງນາຍບ້ານ ໃຫ້ປະຊາຊົນພາຍໃນບ້ານຊາບກ່ອນວັນເລືອກຕັ້ງຢ່າງໜ້ອຍສິບຫ້າວັນ;
- ປະກາດ ແຈ້ງການໃຫ້ປະຊາຊົນກ່ຽວກັບ ວັນເວລາ, ສະຖານທີ່ເລືອກຕັ້ງ ແລະ ບັນຫາອື່ນໆ;
- ກະກຽມບົດສະຫຼຸບການເຄື່ອນໄຫວວຽກງານຂອງ ອົງການປົກຄອງບ້ານໃນໄລຍະຜ່ານມາ ແລະ ແຜນການສຳລັບສະໄໝຕໍ່ໄປ, ເອກະສານອື່ນໆ ທີ່ຈຳເປັນເພື່ອຮັບໃຊ້ການດຳເນີນການເລືອກຕັ້ງນາຍບ້ານ;
- ສ້າງແຜນການດຳເນີນການເລືອກຕັ້ງ ນາຍບ້ານ;

4) ນາຍບ້ານສະເໜີເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເພື່ອຂໍອະນຸມັດຈັດການປ່ອນບັດເລືອກຕັ້ງນາຍບ້ານ;

5) ສຳນວນເອກະສານກ່ຽວກັບການຈັດການປ່ອນບັດເລືອກຕັ້ງມີ: ໃບລົງທະບຽນ, ວາລະດຳເນີນການປ່ອນບັດ, ບັດເຊີນ, ບົດກ່າວຈຸດປະສົງ, ບົດກ່າວເປີດ, ບົດກ່າວປິດ, ບົດສະຫຼຸບການເຄື່ອນໄຫວຂອງອົງການປົກຄອງບ້ານໄລຍະຜ່ານມາ ແລະ ແຜນການໃນຕໍ່ໜ້າ, ບົດກ່າວອຳລາໜ້າທີ່ຂອງນາຍບ້ານ ແລະ ອົງການປົກຄອງບ້ານຊຸດເກົ່າ.

**ຄ.** ການກະກຽມຄົ້ນຄວ້າເປົ້າໝາຍອອກສະໝັກຮັບເລືອກຕັ້ງນາຍບ້ານ

- ກະກຽມເປົ້າໝາຍໄປທາບທາມຫາງສຽງ ເພື່ອໃຫ້ລົງສະໝັກຮັບເລືອກຕັ້ງນາຍບ້ານ ໂດຍຄັດເລືອກຈາກປະຊາຊົນ, ເລຂາໜ່ວຍພັກບ້ານ ຫຼື ຄະນະພັກຮາກຖານ, ສະມາຊິກພັກ, ພະນັກງານ-ລັດຖະກອນ(ນາຍຄູ, ທະຫານ, ຕຳຫຼວດ, ພະນັກງານວິຊາການ...) ທີ່ຕັ້ງຖິ່ນຖານປະຈຳ ລວມທັງພະນັກງານຮາກຖານທີ່ເຮັດວຽກປະຈຳຢູ່ໃນບ້ານນັ້ນແຕ່ ສອງ ປີຂຶ້ນໄປ;
- ຈັດຕັ້ງການສຶກສາອົບຮົມການເມືອງ ເພື່ອການເລືອກຕັ້ງທັງພາຍໃນພັກ ແລະ ໃນໝູ່ປະຊາຊົນ;
- ນຳພາຈັດຕັ້ງການທາບທາມຫາງສຽງຮອບທີໜຶ່ງ(ຄອບຄົວ, ຫົວໜ້າໜ່ວຍຄອບຄົວ);
- ວິເຄາະຜົນການທາບທາມຫາງສຽງຮອບທີໜຶ່ງ;
- ຖ້າຈຳເປັນໃຫ້ດຳເນີນການສຶກສາອົບຮົມການເມືອງຮອບທີສອງ;
- ນຳພາຈັດຕັ້ງການທາບທາມຫາງສຽງຮອບທີສອງ;
- ວິເຄາະຜົນການທາບທາມຫາງສຽງຮອບທີສອງ;

- ຖ້າບັນລຸຄາດໝາຍກໍລາຍງານຜົນການທາມທາບທາງສຽງໃຫ້ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຮັບຊາບ ເພື່ອອອກຂໍ້ຕົກລົງໃຫ້ຈັດຕັ້ງການປ່ອນບັດເລືອກຕັ້ງເອົານາຍບ້ານຕາມລະບຽບ;
- ຖ້າບໍ່ບັນລຸຄາດໝາຍກໍຕ້ອງລາຍງານໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາ ເພື່ອມີການຊີ້ນໍາໃນການດໍາເນີນການສໍາລັບຂັ້ນຕໍ່ໄປ.

**ມາດຕາ 10** ການດໍາເນີນການເລືອກຕັ້ງນາຍບ້ານ

ການດໍາເນີນການເລືອກຕັ້ງນາຍບ້ານ ໃຫ້ປະຕິບັດ ດັ່ງນີ້:

1) ລົງທະບຽນ;
2) ເຄົາລົບທຸງຊາດ;
3) ກ່າວຕ້ອນຮັບ, ສະເໜີຈຸດປະສົງ ແລະ ສະເໜີແຂກທີ່ເຂົ້າຮ່ວມ;
4) ສະເໜີລາຍຊື່ຜູ້ເປັນຄະນະປະທານ ຊຶ່ງປະກອບມີ: ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຫຼື ຜູ້ຕາງໜ້າ, ຫົວໜ້າຫ້ອງການພາຍໃນ, ນາຍບ້ານ, ເລຂາຄະນະພັກ ຮາກຖານບ້ານ ຫຼື ເລຂາໜ່ວຍພັກບ້ານ, ປະທານແນວລາວສ້າງຊາດບ້ານ, ຕາງໜ້າອົງການຈັດຕັ້ງມະຫາຊົນ;
5) ຜ່ານຂໍ້ຕົກລົງວ່າດ້ວຍການອະນຸມັດດໍາເນີນການປ່ອນບັດເລືອກຕັ້ງນາຍບ້ານ;
6) ນາຍບ້ານກ່າວເປີດພິທີຢ່າງເປັນທາງການ;
7) ຕາງໜ້າອົງການປົກຄອງບ້ານຜ່ານບົດສະຫຼຸບການເຄື່ອນໄຫວໄລຍະຜ່ານມາ ແລະ ແຜນການຕໍ່ໜ້າຂອງບ້ານ;
8) ຜູ້ເຂົ້າຮ່ວມປະກອບຄໍາເຫັນ;
9) ນາຍບ້ານ ແລະ ອົງການປົກຄອງບ້ານຊຸດເກົ່າກ່າວອໍາລາໜ້າທີ່;
10) ຫ້ອງການພາຍໃນຜ່ານມາດຕະຖານ ແລະ ເງື່ອນໄຂຂອງຜູ້ຮັບສະໝັກເປັນນາຍບ້ານຊຸດໃໝ່;
11) ແຈ້ງລາຍຊື່ຜູ້ລົງສະໝັກເລືອກຕັ້ງ;
12) ຜູ້ລົງສະໝັກຮັບເລືອກຕັ້ງ ແນະນໍາໂຕ ແລະ ສະເໜີ ນະໂຍບາຍຂອງຕົນເອງຕາມວິທີ ທີ່ເໝາະສົມ;
13) ແຕ່ງຕັ້ງຄະນະກໍາມະການຄວບຄຸມການປ່ອນບັດ;
14) ຄະນະຄວບຄຸມການປ່ອນບັດຂຶ້ນຮັບໜ້າທີ່, ຜ່ານລະບຽບ, ຄໍາແນະນໍາໃນການປ່ອນບັດ ແລະ ກ່າວປະຕິຍານຕົນ;
15) ດໍາເນີນການປ່ອນບັດເລືອກຕັ້ງ: ຜູ້ມີສິດລົງທະບຽນຮັບບັດ, ກາບັດລົງຄະແນນສຽງແບບປິດລັບ ແລະ ປ່ອນບັດ;
16) ຄະນະຄວບຄຸມການປ່ອນບັດນັບຄະແນນແບບເປີດເຜີຍຊ້ອງໜ້າຄະນະປະທານ ແລະ ປະຊາຊົນ; ສະຫຼຸບ, ແຈ້ງຜົນການເລືອກຕັ້ງ ແລະ ມອບວາລະໃຫ້ຄະນະປະທານ;
17) ຕາງໜ້າຄະນະປະທານປະກາດຜົນການປ່ອນບັດເລືອກຕັ້ງ;
18) ຜ່ານບົດບັນທຶກການປ່ອນບັດເລືອກຕັ້ງນາຍບ້ານ ໂດຍສະເໜີຂັ້ນຕອນການດໍາເນີນການເລືອກຕັ້ງ, ຈໍານວນຜູ້ລົງສະໝັກຮັບເລືອກຕັ້ງ, ຈໍານວນຜູ້ມາປ່ອນບັດເລືອກຕັ້ງ, ຄະແນນຜູ້ສະໝັກຮັບເລືອກຕັ້ງຂອງແຕ່ລະຄົນ, ບັນຍາກາດການເລືອກຕັ້ງ; ຜູ້ບັນທຶກ ແລະ ນາຍບ້ານ ເປັນຜູ້ລົງລາຍ ເຊັນຮັບຮູ້;
19) ຕາງໜ້າຄະນະປະທານມີຄໍາເຫັນ ແລະ ກ່າວປິດ ຢ່າງເປັນທາງການ.

**ມາດຕາ 11** ຮູບແບບການຈັດພິທີເລືອກຕັ້ງນາຍບ້ານ

ການຈັດພິທີເລືອກຕັ້ງນາຍບ້ານ ໃຫ້ປະຕິບັດ ດັ່ງນີ້:

1) ຊີ່ປະເທດ ແລະ ຄຳຂວັນ: ຈັດວາງໃສ່ກາງເວທີ ໃຫ້ສູງກວ່າທຸງຊາດ ແລະ ທຸງພັກ;
2) ທຸງຊາດ ແລະ ທຸງພັກ: ຈັດວາງໃສ່ກາງເວທີ ຢູ່ກ້ອງ ຊີ່ປະເທດ ແລະ ຄຳຂວັນ;
3) ຮູບ ປະທານ ໄກສອນ ພົມວິຫານ: ຈັດວາງໃສ່ກາງເວທີ ຢູ່ກ້ອງ ທຸງຊາດ ແລະ ທຸງພັກ;
4) ຄຳວ່າ ການປ່ອນບັດເລືອກຕັ້ງນາຍບ້ານ: ຈັດວາງໃສ່ກາງເວທີ ຢູ່ກ້ອງ ຮູບ ປະທານ ໄກສອນ ພົມວິຫານ;
5) ຄຳຂວັນຂອງບ້ານ: ຈັດວາງໃສ່ກາງເວທີ ຢູ່ກ້ອງຄຳວ່າ ການປ່ອນບັດເລືອກຕັ້ງນາຍບ້ານ.

**ມາດຕາ 12** ການຮັບຮອງຜົນການເລືອກຕັ້ງນາຍບ້ານ

– ຄະນະຮັບຜິດຊອບເລືອກຕັ້ງນາຍບ້ານສະເໜີ ຜົນການເລືອກຕັ້ງໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາຮັບຮອງ ແລະ ອອກຂໍ້ຕົກລົງແຕ່ງຕັ້ງນາຍບ້ານ ແລະ ຮອງນາຍບ້ານໃໝ່ ໃຫ້ສຳເລັດພາຍໃນ ສິບຫ້າວັນ;
– ໃນໄລຍະລໍຖ້າການແຕ່ງຕັ້ງນາຍບ້ານຜູ້ໃໝ່, ນາຍບ້ານຜູ້ເກົ່າເປັນຜູ້ຮັກສາການມີສິດແກ້ໄຂວຽກງານບໍລິ ຫານທີ່ຈຳເປັນເທົ່ານັ້ນຈົນກວ່າ ນາຍບ້ານຜູ້ໃໝ່ໄດ້ຮັບການແຕ່ງຕັ້ງ;
– ໃຫ້ມີການຈັດຕັ້ງມອບໂອນໜ້າທີ່ລະຫວ່າງນາຍບ້ານຜູ້ເກົ່າ ກັບ ນາຍບ້ານຜູ້ໃໝ່ພາຍໃນເວລາເຈັດວັນ ຫຼັງຈາກ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ໄດ້ເຊັນຂໍ້ຕົກລົງແຕ່ງຕັ້ງນາຍບ້ານຜູ້ໃໝ່.

**ມາດຕາ 13** ການແຕ່ງຕັ້ງນາຍບ້ານໂດຍກົງໃນບ້ານ ທີ່ມີຄວາມຈຳເປັນ

ບ້ານທີ່ມີຄວາມຈຳເປັນຕ້ອງໄດ້ຮັບການແຕ່ງຕັ້ງນາຍບ້ານ ແລະ ເປົ້າໝາຍ ທີ່ຈະຖືກແຕ່ງຕັ້ງໃຫ້ເປັນນາຍ ບ້ານຂອງບ້ານດັ່ງກ່າວແມ່ນເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ຕົກລົງໂດຍຜ່ານຂັ້ນຕອນການຄົ້ນຄວ້າ ດັ່ງຕໍ່ໄປນີ້:

1) ບົນພື້ນຖານຂໍ້ມູນ ແລະ ຕິດຊີ່ບອກກ່ຽວກັບສະພາບຕ່າງໆທີ່ມີຫາງວ່ຽງຫຍໍ້ທໍ້ຂອງບ້ານເປົ້າໝາຍ; ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແຕ່ງຕັ້ງຄະນະຮັບຜິດຊອບ ລົງໄປເກັບກຳ ແລະ ປະເມີນສະພາບ ແລະ ສະຖານະການຂອງບ້ານ ເພື່ອລາຍງານໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາເຖິງຄວາມຈຳເປັນທີ່ແທ້ຈິງ.
2) ກໍລະນີມີຄວາມຈຳເປັນແທ້ ແມ່ນມອບໃຫ້ຫ້ອງການພາຍໃນສົມທົບກັບພາກສ່ວນທີ່ກ່ຽວຂ້ອງລົງໄປເຮັດວຽກ ແລະ ນຳພາປັບປຸງການຈັດຕັ້ງຂອງບ້ານຕາມສະພາບຄວາມຈຳເປັນຕາມຂັ້ນຕອນ ດັ່ງນີ້:
– ລົງຊີ້ນຳ-ນຳພາອົງການປົກຄອງບ້ານຊຸດເກົ່າປະຕິບັດໜ້າທີ່ໄປຕໍ່ໄລຍະໜຶ່ງ ເພື່ອກຳສະພາບການຕ່າງໆຂອງບ້ານໃຫ້ເລິກເຊິ່ງ;
– ນຳພາອົງການປົກຄອງບ້ານ ປະເມີນຜົນການ ຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງບ້ານ ແລະ ຕີລາຄາຈັດປະເພດພະນັກງານຂອງບ້ານ;
– ຊອກຫາເປົ້າໝາຍເພື່ອແຕ່ງຕັ້ງເປັນນາຍບ້ານຂອງບ້ານທີ່ຈຳເປັນ ໂດຍເລີ່ມຈາກຄົນໃນໜ່ວຍພັກ, ປະ

ຊາຊົນ, ພະນັກງານ-ລັດຖະກອນ (ລັດຖະກອນ, ທະຫານ, ຕຳຫຼວດ, ຄູ, ແພດ...) ທີ່ຕັ້ງຖິ່ນຖານ ຢູ່ໃນບ້ານ ລວມທັງພະນັກງານບໍານານທີ່ໄດ້ຮັບການແຕ່ງຕັ້ງ ໃຫ້ລົງເຮັດວຽກປະຈໍາຢູ່ບ້ານນັ້ນແຕ່ ສອງ ປີຂຶ້ນໄປກ່ອນ; ຖ້າບໍ່ມີຜູ້ຄົບເງື່ອນໄຂໃຫ້ຄະນະຮັບຜິດຊອບລາຍງານເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເພື່ອພິຈາລະນາຄັດເລືອກເປົ້າໝາຍອື່ນທີ່ບໍ່ໄດ້ຕັ້ງຖິ່ນຖານຢູ່ໃນບ້ານນັ້ນ ຫຼື ຕັ້ງຖິ່ນຖານຢູ່ໃນບ້ານນັ້ນ ບໍ່ຄົບ ສອງ ປີ ເພື່ອແຕ່ງຕັ້ງເປັນນາຍບ້ານ;

- ເປີດກອງປະຊຸມບ້ານ ເພື່ອສະເໜີເປົ້າໝາຍ ແລະ ລຸໄລ່ ຫຼື ຊີ້ແຈງໃຫ້ປະຊາຊົນໃນບ້ານ ຮັບຮູ້ ແລະ ເຂົ້າໃຈເຖິງ ຄວາມຈໍາເປັນ;
- ສະເໜີເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ອອກຂໍ້ຕົກລົງແຕ່ງຕັ້ງນາຍບ້ານຜູ້ໃໝ່ ພາຍໃນ ສິບຫ້າວັນ;
- ຈັດຕັ້ງການມອບໂອນໜ້າທີ່ລະຫວ່າງນາຍບ້ານຜູ້ເກົ່າ ແລະ ນາຍບ້ານຜູ້ໃໝ່ ພາຍໃນເວລາ ເຈັດວັນ ຫຼັງຈາກເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ໄດ້ເຊັນຂໍ້ຕົກລົງແຕ່ງຕັ້ງນາຍບ້ານຜູ້ໃໝ່.

## ໝວດທີ 4
## ການພົ້ນຈາກຕໍາແໜ່ງ

**ມາດຕາ 14** ການພົ້ນຈາກຕໍາແໜ່ງຂອງນາຍບ້ານ

ນາຍບ້ານພົ້ນຈາກຕໍາແໜ່ງໄດ້ໃນກໍລະນີດັ່ງນີ້:

- ໝົດອາຍຸການ;
- ເສຍຊີວິດ;
- ໄດ້ຮັບອະນຸຍາດລາອອກ;
- ບ້ານທີ່ຕົນປົກຄອງຖືກຍຸບເລີກ;
- ຖືກປົດຕໍາແໜ່ງຍ້ອນມີຄວາມບົກຜ່ອງ ຫຼື ຂາດຄວາມສາມາດໃນການປະຕິບັດໜ້າທີ່;
- ປະລະໜ້າທີ່ ກາຍ ສາມ ເດືອນໂດຍບໍ່ໄດ້ມອບໝາຍໜ້າທີ່ໃຫ້ຮອງຜູ້ໃດໜຶ່ງ.

**ມາດຕາ 15** ການຮັກສາການແທນ

ເມື່ອອາຍຸການດໍາລົງຕໍາແໜ່ງຂອງນາຍບ້ານສິ້ນສຸດຕາມລະບຽບ; ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຫຼື ຜູ້ຕາງໜ້າທີ່ໄດ້ຮັບການແຕ່ງຕັ້ງ ລົງນໍາພາປະຊາຊົນຈັດກອງປະຊຸມບ້ານ ເພື່ອເລືອກຕັ້ງເອົານາຍບ້ານຜູ້ໃໝ່ ໃຫ້ສໍາເລັດພາຍໃນ ສາມສິບວັນ. ພາຍຫຼັງສໍາເລັດການເລືອກຕັ້ງແລ້ວ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ຮັບຮອງເອົາຜົນຂອງການເລືອກຕັ້ງ ແລະ ແຕ່ງຕັ້ງນາຍບ້ານພາຍໃນສິບຫ້າ ວັນ.

ໃນໄລຍະລໍຖ້າການແຕ່ງຕັ້ງນາຍບ້ານຜູ້ໃໝ່; ນາຍບ້ານຜູ້ເກົ່າ ເປັນຜູ້ຮັກສາການຈົນກວ່ານາຍບ້ານຜູ້ໃໝ່ໄດ້ຮັບການແຕ່ງຕັ້ງ.

ໃນກໍລະນີທີ່ ນາຍບ້ານຖືກປົດຕໍາແໜ່ງດ້ວຍເຫດຜົນໃດໜຶ່ງ, ຮອງນາຍບ້ານເປັນຜູ້ຮັກສາການຈົນກວ່າຈະມີການເລືອກຕັ້ງ ຫຼື ແຕ່ງຕັ້ງນາຍບ້ານຜູ້ໃໝ່ ແຕ່ບໍ່ໃຫ້ກາຍກໍານົດເວລາ ສາມສິບ ວັນ.

ໃນກໍລະນີທີ່ ນາຍບ້ານ ແລະ ຮອງນາຍບ້ານ ຖືກປົດຕໍາແໜ່ງ ດ້ວຍເຫດຜົນໃດໜຶ່ງພ້ອມກັນ; ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແຕ່ງຕັ້ງພະນັກງານຂອງຕົນມາຮັບຜິດຊອບ ແລະ ນໍາພາ

ການເລືອກຕັ້ງນາຍບ້ານຄົນໃໝ່ໃຫ້ສຳເລັດພາຍໃນກຳນົດເວລາ ສາມສິບ ວັນ.

ໃນກໍລະນີຈຳເປັນ ທີ່ບໍ່ສາມາດຈັດການເລືອກຕັ້ງໄດ້ ດ້ວຍເຫດຜົນໃດໜຶ່ງ; ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເປັນຜູ້ແຕ່ງຕັ້ງບັ້ງຄັບນາຍບ້ານໂດຍຜ່ານການທາບທາມທາງສຽງຂອງປະຊາຊົນພາຍໃນບ້ານ.

## ໝວດທີ 5
## ການເງິນບ້ານ

**ມາດຕາ 16** ວຽກງານການເງິນບ້ານ

ການເງິນບ້ານ ບໍ່ແມ່ນຫົວໜ່ວຍງົບປະມານເອກະລາດ ແລະ ບໍ່ແມ່ນຂັ້ນໜຶ່ງ ອີກຂອງງົບປະມານທ້ອງຖິ່ນ, ເປັນພຽງຫົວໜ່ວຍພື້ນຖານຂອງໜ່ວຍງານເສດຖະກິດ, ຈັດຕັ້ງຂຶ້ນເພື່ອຈັດເກັບບາງປະເພດລາຍຮັບ ສົ່ງໃຫ້ຂັ້ນເມືອງຕາມການມອບໝາຍ ແລະ ປະຕິບັດໜ້າທີ່ຄຸ້ມຄອງການເງິນຂອງບ້ານ ໃຫ້ມີຄວາມຖືກຕ້ອງຕາມລະບຽບການເງິນ, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນ.

**ມາດຕາ 17** ລາຍຮັບທີ່ເມືອງ, ເທດສະບານ, ນະຄອນ ມອບໝາຍໃຫ້ການເງິນບ້ານເກັບສົ່ງ

ລາຍຮັບທີ່ເມືອງ, ເທດສະບານ, ນະຄອນ ມອບໝາຍໃຫ້ການເງິນບ້ານເກັບສົ່ງຕາມລະບຽບ ມີດັ່ງນີ້:

- ຄ່າທຳນຽມນຳໃຊ້ທີ່ດິນ;
- ອາກອນຊັບພະຍາກອນ;
- ຄ່າທຳນຽມຄົມມະນາຄົມທາງນ້ຳ;
- ຄ່າທຳນຽມຂຶ້ນທະບຽນສັດ;
- ຄ່າທຳນຽມເອກະສານຕ່າງໆທີ່ບ້ານອອກ ຫຼື ຢັ້ງຢືນ;
- ອາກອນລາຍໄດ້ຈາກຄ່າເຊົ່າຊັບສິນ (ລົດດູດ, ລົດໄຖ, ລົດຂົນສົ່ງ ທີ່ບໍ່ໄດ້ຂຶ້ນທະບຽນ ແລະ ອາກອນອື່ນໆ) ຂອງບຸກຄົນໃນຂອບເຂດຄວາມຮັບຜິດຊອບຂອງບ້ານຕົນ;
- ອາກອນລາຍໄດ້ຈາກການຮັບເໝົາກໍ່ສ້າງ ແລະ ສ້ອມແປງຂອງບຸກຄົນໃນຂອບເຂດຄວາມຮັບຜິດຊອບຂອງບ້ານຕົນ;
- ຄ່າທຳນຽມຕ່າງໆທີ່ຂັ້ນເມືອງມອບໃຫ້ເປັນທາງການ.

**ມາດຕາ 18** ລາຍຮັບທີ່ການເງິນບ້ານມີສິດຄຸ້ມຄອງ ແລະ ນຳໃຊ້

- ສ່ວນແບ່ງປັນຈາກການເກັບລາຍຮັບທີ່ຂັ້ນເມືອງແບ່ງປັນໃຫ້ຕາມການກຳນົດຂອງກະຊວງການເງິນ;
- ສ່ວນແບ່ງຄ່າທຳນຽມຈາກການໄກ່ເກ່ຍແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ;
- ສ່ວນແບ່ງຈາກການເກັບຄ່າບໍລິການຊົນລະປະທານ ແລະ ອື່ນໆ;
- ລາຍໄດ້ຈາກການອຸດໜູນງົບປະມານຂອງຂັ້ນເມືອງ;
- ລາຍໄດ້ຈາກການປະກອບສ່ວນ ຫຼື ການອຸດໜູນຂອງປະຊາຊົນ;
- ລາຍໄດ້ຈາກການຈັດງານຫາລາຍໄດ້ຂອງບ້ານ;
- ລາຍໄດ້ອື່ນໆ ຕາມລະບຽບກົດໝາຍກຳນົດໄວ້.

**ມາດຕາ 19** ເປົ້າໝາຍການໃຊ້ຈ່າຍຂອງການເງິນບ້ານ

ເປົ້າໝາຍການໃຊ້ຈ່າຍຂອງການເງິນບ້ານມີດັ່ງນີ້:

- ລາຍຈ່າຍດ້ານເສດຖະກິດ: ສ້າງທາງເຂົ້າບ້ານ, ສ້າງ ແລະ ສ້ອມແປງຫ້ອງການບ້ານ, ຝາຍກັນນ້ຳ, ຊົນລະປະທານຂະໜາດນ້ອຍ, ນ້ຳບາດານ, ນ້ຳລິນ, ຊຸດສະ, ຊຸກຍູ້ການ ຜະລິດສິນຄ້າກະສິກຳ,ແກ້ໄຂຄວາມທຸກຈົນໃນຂອບເຂດຄວາມຮັບຜິດຊອບຂອງບ້ານ;
- ລາຍຈ່າຍດ້ານວັດທະນະທຳ-ສັງຄົມ: ອຸດໜູນສະໂມສອນປະຈຳບ້ານ, ຫໍສະໝຸດປະຈຳບ້ານ, ບຳລຸງ ໜ່ວຍວັນນະຄະດີ ແລະ ສະຫວັດດີການອື່ນໆຂອງບ້ານ;
- ລາຍຈ່າຍບໍລິຫານກົງຈັກການປົກຄອງບ້ານ: ຄ່ານ້ຳ, ໄຟຟ້າ, ໂທລະສັບ, ອານາໄມຫ້ອງການບ້ານ,ຊື້ເຄື່ອງໃຊ້ຫ້ອງການ, ຮັບໃຊ້ກອງປະຊຸມຂອງບ້ານ; ຈ່າຍບຳເນັດ ແລະ ອຸດໜູນໃຫ້ພະນັກ ງານບ້ານ; ແບ່ງເຂົ້າຄັງຂອງອົງການຈັດຕັ້ງມະຫາຊົນ ແລະ ແນວໂຮມບ້ານຕາມລະບຽບບ້ານ.

## ໝວດທີ 6
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 20** ຫຼັກການ ແລະ ວິທີເຮັດວຽກ

- ເຮັດວຽກຕາມຫຼັກການ ລວມສູນປະຊາທິປະໄຕ ປະຕິບັດຕາມລະບອບຫົວໜ້າດຽວເປັນພື້ນຖານການຕົກລົງຂອງກອງປະຊຸມ, ແບ່ງວຽກໃຫ້ບຸກຄົນຮັບຜິດຊອບ;
- ເຮັດວຽກຢ່າງມີແຜນການ, ແຜນງານ, ໂຄງການ, ມີການກຳນົດເວລາ, ມີການຄິດໄລ່ ປະສິດທິຜົນໂດຍອີງຕາມຈຸດພິເສດ ແລະ ສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ.

**ມາດຕາ 21** ການພົວພັນປະສານງານ

- ອົງການປົກຄອງບ້ານມີການພົວພັນ ແລະ ປະສານງານກັບ ການຈັດຕັ້ງທີ່ກ່ຽວຂ້ອງໃນການເຄື່ອນໄຫວວຽກງານ; ໃນກໍລະນີບໍ່ເອກະພາບກັນໃນເລື່ອງໃດໜຶ່ງໃຫ້ນຳສະເໜີອົງການຈັດຕັ້ງຂັ້ນເທິງຖັດຕົນ ເພື່ອ ພິຈາລະນາຕົກລົງ;
- ອົງການປົກຄອງບ້ານຢູ່ພາຍໃຕ້ການກວດກາກ່ຽວກັບການເຄື່ອນໄຫວປະຕິບັດໜ້າທີ່ວຽກງານຂອງຕົນຈາກປະຊາຊົນ, ການກວດກາຈາກຂັ້ນຂອງຕົນ ແລະ ອົງການກວດກາ ຂອງຂັ້ນເທິງພ້ອມທັງສະຫຼຸບການລາຍງານໃຫ້ຂັ້ນເທິງຢ່າງເປັນປົກກະຕິ.

## ໝວດທີ 7
## ຖານະ ແລະ ນະໂຍບາຍຂອງລັດຕໍ່ລັດຖະກອນ, ທະຫານ, ຕຳຫຼວດທີ່ໄດ້ຮັບ ການເລືອກຕັ້ງ ຫຼື ແຕ່ງຕັ້ງ ໃຫ້ເປັນນາຍບ້ານໂດຍກົງ

**ມາດຕາ 22** ຖານະລັດຖະກອນ, ທະຫານ, ຕຳຫຼວດທີ່ໄດ້ຮັບການ ເລືອກຕັ້ງ ຫຼື ແຕ່ງຕັ້ງ ໃຫ້ເປັນນາຍບ້ານໂດຍກົງ

ລັດຖະກອນ, ທະຫານ, ຕຳຫຼວດທີ່ໄດ້ຮັບການເລືອກຕັ້ງ ຫຼື ແຕ່ງຕັ້ງ ໃຫ້ເປັນນາຍບ້ານໂດຍກົງ ຊຶ່ງໃນໄລຍະທີ່ເປັນນາຍບ້ານຍັງຄົງຖານະເປັນລັດຖະກອນ, ທະຫານ, ຕຳຫຼວດຢ່າງສົມບູນ; ຍັງສັງກັດຢູ່ນຳຂະແໜງການ ແລະ ກົມກອງເດີມຂອງລັດພຽງແຕ່ໄດ້ໂຈະການປະຕິບັດໜ້າທີ່ເກົ່າໄວ້ຊົ່ວຄາວ ເພື່ອອອກມາປະຕິບັດພັນທະໜ້າທີ່ເປັນນາຍບ້ານ ຕາມການແຕ່ງຕັ້ງເທົ່ານັ້ນ.

**ມາດຕາ 23** ນະໂຍບາຍຂອງລັດ

ລັດຖະກອນ, ທະຫານ, ຕຳຫຼວດທີ່ໄດ້ຮັບການເລືອກຕັ້ງ ຫຼື ແຕ່ງຕັ້ງໃຫ້ເປັນນາຍບ້ານໂດຍກົງ ຍັງໄດ້ຮັບເງິນເດືອນ, ປີການ ແລະ ການເລື່ອນຊັ້ນ-ຂັ້ນເງິນເດືອນຕາມປົກກະຕິ, ຮັກສາ ແລະ ໄດ້ຮັບເງິນອຸດໜູນຕຳແໜ່ງບໍລິຫານຄືເກົ່າພ້ອມທັງໄດ້ຮັບເງິນບຳເນັດຄືກັນກັບພະນັກງານຂອງບ້ານ. ຖ້າເປັນລັດຖະກອນວິຊາການ, ພົນທະ ຫານພົນຕຳຫຼວດທີ່ມີອາຍຸການແຕ່ ແປດ ປີຂຶ້ນໄປ ໃຫ້ກົມກອງເດີມ ຕົກລົງແຕ່ງຕັ້ງໃຫ້ດຳລົງຕຳແໜ່ງບໍລິຫານປະເພດ ແປດ ຫຼື ທຽບເທົ່າຕາມດຳລັດສະບັບເລກທີ 99/ນຍ, ລົງວັນທີ 23 ມິຖຸນາ 2008 ວ່າດ້ວຍຕຳແໜ່ງບໍລິຫານຂອງລັດຖະກອນ ແຫ່ງ ສປປ ລາວ.

ເມື່ອສິ້ນສຸດພັນທະເປັນນາຍບ້ານແລ້ວ ກໍໃຫ້ກັບຄືນສູ່ກົມກອງເດີມພ້ອມກັບຕຳແໜ່ງບໍລິຫານທີ່ໄດ້ຮັບ.

**ມາດຕາ 24** ອາຍຸການດຳລົງຕຳແໜ່ງນາຍບ້ານຂອງ ລັດຖະກອນ, ທະຫານ, ຕຳຫຼວດ

ອາຍຸການດຳລົງຕຳແໜ່ງນາຍບ້ານຂອງ ລັດຖະກອນ, ທະຫານ, ຕຳຫຼວດທີ່ໄດ້ຮັບການເລືອກຕັ້ງ ຫຼື ແຕ່ງຕັ້ງໃຫ້ເປັນນາຍບ້ານໂດຍກົງ ບໍ່ໃຫ້ເກີນ ສອງ ສະໄໝ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 25** ຕາປະທັບ

ອົງການປົກຄອງບ້ານມີຕາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານລັດຖະການ.

**ມາດຕາ 26** ການຈັດຕັ້ງປະຕິບັດ

- ມອບໃຫ້ກົມການປົກຄອງທ້ອງຖິ່ນ ກະຊວງພາຍໃນ ເປັນເຈົ້າການໃນການຈັດຕັ້ງ ເຜີຍແຜ່, ເຊື່ອມຊຶມ ແນະນຳ, ຕິດຕາມ ແລະ ກວດກາຜົນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;
- ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນເຜີຍແຜ່, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ໃຫ້ເປັນເອກະພາບກັນ.

**ມາດຕາ 27** ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງບ້ານ ສະບັບເລກທີ 674/ນຍ, ລົງວັນທີ 27 ກັນຍາ 2012 ແລະ ຂໍ້ຕົກລົງເພີ່ມເຕີມກ່ຽວກັບໜ່ວຍງານຊ່ວຍວຽກບ້ານ ແລະ ການເລືອກຕັ້ງ ຫຼື ແຕ່ງຕັ້ງນາຍບ້ານ ສະບັບເລກທີ 663/ນຍ, ລົງວັນທີ 10 ຕຸລາ 2013.

**ລັດຖະມົນຕີ**

ຄຳພັນ ສູນວິເລີດ